**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ
ຄະນະຄຸ້ມຄອງ ເຂດເສດຖະກິດພິເສດ ແຂວງບໍ່ແກ້ວ

ເລກທີ: 594 /ຄຂສພ.ບກ
ບໍ່ແກ້ວ, ວັນທີ: 19 DEC 2020

# ແຈ້ງການ

**ເຖິງ: ອົງການຈັດຕັ້ງພັກ-ລັດ, ນັກທຸລະກິດ, ຜູ້ປະກອບການ, ຜູ້ອອກແຮງງານ ແລະ ປະຊາຊົນ ບັນດາເຜົ່າທີ່ຢູ່ພາຍໃນເຂດເສດຖະກິດພິເສດ ສາມຫຼ່ຽມຄຳ**

**ເລື່ອງ: ສືບຕໍ່ປະຕິບັດມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງເຊື້ອພະຍາດປອດອັກເສບ COVID-19 ໃນໄລຍະວັນທີ 20-31 ທັນວາ 2020.**

- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ, ວ່າດ້ວຍການກຳນົດນະໂຍບາຍ ແລະ ມາດຕະການເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດ COVID -19 ຕໍ່ເສດຖະກິດລາວ ສະບັບເລກທີ 31/ນຍ, ລົງວັນທີ 02 ເມສາ 2020;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະຄຸ້ມຄອງ ເຂດເສດຖະກິດພິເສດແຂວງ ແລະ ນະຄອນຫຼວງ ສະບັບເລກທີ 1971/ກຜທ, ລົງວັນທີ 15 ສິງຫາ 2018;
- ອີງຕາມ ໜັງສືສະເໜີຂອງປະທານສະພາບໍລິຫານ ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ, ສະບັບເລກທີ 613/ສພຊ.ຂສພຄ, ລົງວັນທີ 19 ທັນວາ 2020;

ຄະນະຄຸ້ມຄອງເຂດເສດຖະກິດພິເສດ ແຂວງບໍ່ແກ້ວ (ຄຂສພ.ບກ) ຂໍຖືເປັນກຽດແຈ້ງການມາຍັງທ່ານຊາບວ່າ: ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ (ຂສພຄ) ຍັງຈະສືບຕໍ່ປະຕິບັດມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂ ການແຜ່ລະບາດຂອງເຊື້ອພະຍາດປອດອັກເສບ ໂຄວິດ-19 ຕື່ມອີກ **11** ວັນ, ນັບຕັ້ງແຕ່ວັນທີ **20-31/12/2020** ຢ່າງເຂັ້ມງວດ, ເຊິ່ງມີລາຍລະອຽດດັ່ງນີ້:

1) ສຳລັບພົນລະເມືອງລາວ ແລະ ຄົນຕ່າງປະເທດ ທີ່ຈະເຂົ້າ-ອອກ ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ຕ້ອງໄດ້ຮັບການເຫັນດີຈາກ ຄະນະຄຸ້ມຄອງ ເຂດເສດຖະກິດພິເສດ ແຂວງບໍ່ແກ້ວ ແລະ ສະພາບໍລິຫານ ກ່ອນ. ສ່ວນພໍ່ຄ້າຊາວຂາຍທີ່ມາຂາຍເຄື່ອງຢູ່ຕະຫລາດຈັດສັນຊົ່ວຄາວ ແມ່ນໃຫ້ສືບຕໍ່ການໂຈະມາຂາຍເຄື່ອງຈົນກ່ວາຈະມີແຈ້ງການສະບັບໃໝ່;
2) ໃນໄລຍະເວລານີ້ ການນຳເຂົ້າສິນຄ້າ ເຄື່ອງອຸປະໂພກ-ບໍລິໂພກ ແລະ ອຸປະກອນ ເຄື່ອງກໍ່ສ້າງຕ່າງໆ ທີ່ຈຳເປັນຕ້ອງໄດ້ຮັບການເຫັນດີຈາກຄະນະຄຸ້ມຄອງ ເຂດເສດຖະກິດພິເສດ ແຂວງບໍ່ແກ້ວ ແລະ ສະພາບໍລິຫານ ກ່ອນ;
3) ໃຫ້ທຸກຄົນທີ່ອາໃສ ແລະ ເຄື່ອນໄຫວວຽກງານຢູ່ພາຍໃນເຂດ ຕ້ອງມີສະຕິສູງຕໍ່ການປ້ອງກັນພະຍາດດັ່ງກ່າວເປັນຕົ້ນແມ່ນຕ້ອງໃສ່ໜ້າກາກອະນາໄມທຸກໆຄັ້ງເມື່ອອອກຈາກບ່ອນພັກອາໃສ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຮ. ຫົວໜ້າຄະນະຄຸ້ມຄອງ**
**ເຂດເສດຖະກິດພິເສດ ແຂວງບໍ່ແກ້ວ**

ຄະນະຄຸ້ມຄອງ ເຂດເສດຖະກິດພິເສດ ແຂວງບໍ່ແກ້ວ

ໂອນີພັນ ອຸດົມສັກ
Oniphanh OUDOMSACK

**ເບີໂທຕິດຕໍ່ປະສານງານ:**

- ທ່ານ ຄຳສະຫວາດ ແກ້ວປັນຍາ ຫ້ອງການ ຄຂສພ.ບກ 020 54535653;
- ທ່ານ ອາຕິງ ລາວຈາງ ຫ້ອງການ ສະພາບໍລິຫານ ຂສພຄ 020 55066999.